**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເມືອງປາກງື່ມ

ເລກທີ 502 /ຈມ.ປງ

ລົງວັນທີ 29 ຕຸລາ 2024

ຂາເຂົ້າ ສໍານັກງານອົງການປົກຄອງ ນວ ໜ່ວຍງານບໍລິການປະຕູດຽວ ເລກທີ: 4945 ວັນທີ: 30-10-24

## ໜັງສືສະເໜີ

**ຮຽນ:** ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ຂໍທິດຊີ້ນຳໃນການສະເຫຼີມສະຫຼອງວັນສ້າງຕັ້ງເມືອງປາກງື່ມ ຄົບຮອບ 30 ປີ (30 ທັນວາ 1994 ຫາ 30 ທັນວາ 2024).

- **ອີງຕາມ**: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ໝວດທີ IV ມາດຕາ 40 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- **ອີງຕາມ**: ການຕົກລົງເຫັນດີກອງປະຊຸມຄະນະປະຈໍາພັກເມືອງປາກງື່ມ ຄັ້ງວັນທີ 09 ກັນຍາ 2024.

ເພື່ອເຮັດໃຫ້ງານດັ່ງກ່າວຖືກຈັດຕັ້ງປະຕິບັດໃຫ້ຮັບປະກັນທາງດ້ານເນື້ອໃນ ແລະ ຮູບການມີຄຸນນະພາບດີ

ເຈົ້າເມືອງປາກງື່ມ ຈຶ່ງຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນໍາໃນການສະເຫຼີມສະຫຼອງວັນສ້າງຕັ້ງເມືອງປາກງື່ມ ຄົບຮອບ 30 ປີ (30 ທັນວາ 1994 ຫາ 30 ທັນວາ 2024).

**1. ຈຸດປະສົງ:**

- ເພື່ອເປັນການໂຄສະນາໃຫ້ປະຊາຊົນຊາວເມືອງປາກງື່ມ ແລະ ທົ່ວສັງຄົມໄດ້ຮັບຮູ້ ເຂົ້າໃຈ ແລະ ເຫັນໄດ້ເຖິງໝາກຜົນຂອງການປົກປັກຮັກສາ ແລະ ສ້າງສາພັດທະນາເມືອງປາກງື່ມ, ໂດຍສະເພາະຜ່ານການຈັດຕັ້ງ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ. ເວົ້າລວມ ເວົ້າສະເພາະແມ່ນການຈັດ ຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຂັ້ນເມືອງ, ຂັ້ນນະຄອນຫຼວງວຽງຈັນ ແລະ ຂັ້ນສູນກາງແຕ່ລະໄລຍະ;
- ເປັນການສ້າງຂະບວນການຕ້ອນຮັບວັນສໍາຄັນຕ່າງໆຂອງຊາດ-ຂອງພັກ ທີ່ຈະມາເຖິງນີ້ເຊັ່ນ: ວັນຊາດ ( 2 ທັນວາ 1975 ຫາ 2 ທັນວາ 2024 ) ຄົບຮອບ 49 ປີ, ວັນສ້າງຕັ້ງພັກປະຊາຊົນປະຕິວັດ ( 22 ມີນາ 1955 ຫາ 12 ມີນາ 2024 ) ຄົບຮອບ 69 ປີ, ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ( 13 ທັນວາ 1920 ຫາ 13 ທັນວາ 2024 ) ຄົບຮອບ 104 ປີ, ກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກເມືອງ, ກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກນະຄອນຫຼວງວຽງຈັນ ແລະ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງສູນກາງພັກ ໃຫ້ມີບັນບັນຍາກາດຟົດຟື້ນ;

**2. ຄາດໝາຍ**:

- ເພື່ອໄວ້ເປັນຫຼັກຖານແຫຼ່ງຂໍ້ມູນທາງດ້ານຄວາມຮູ້ໃຫ້ແກ່ລຸ້ນລູກຫຼານ, ຜູ້ເກີດໃໝ່ໃຫຍ່ລຸນ ໄດ້ສຶກສາຮໍ່າຮຽນກ່ຽວກັບປະຫວັດສາດຄວາມເປັນມາຂອງເມືອງປາກງື່ມ ນັບແຕ່ກ່ອນ ແລະ ຫຼັງປົດປ່ອຍປະເທດຊາດຈົນຮອດປະຈຸບັນ;
- ເພື່ອເປັນການປຸກລະດົມໃຫ້ພະນັກງານ, ທະຫານຕໍາຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນຊາວເມືອງປາກງື່ມ ມີຈິດໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງຕົນແລ້ວເປັນເຈົ້າການປະກອບສ່ວນເຂົ້າໃນການເຄົາລົບຕໍ່

ລະບຽບກົດໝາຍ ແລະ ປະຕິບັດສອງໜ້າທີ່ຍຸດທະສາດຂອງພັກຄື: ປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດ, ບ້ານ, ເມືອງ ໃຫ້ມີຄວາມຈະເລີນກ້າວໜ້າ;

- ເພື່ອເຮັດໃຫ້ພະນັກງານ, ທະຫານ-ຕຳຫຼວດ ແລະ ປະຊາຊົນຊາວເມືອງປາກງື່ມ ພ້ອມພາກັນເປັນຈິດໜຶ່ງໃຈດຽວກັນ, ຫັນໜ້າເຂົ້າມາສ້າງຜົນງານເພື່ອຕ້ອນຮັບກອງປະຊຸມໃຫຍ່ **3** ຂັ້ນຂອງພັກ ແລະ ວັນສຳຄັນຕ່າງໆຂອງຊາດຂອງພັກ ໃນປີ **2025**.

**3.** ບັນດາໜ້າວຽກຈຸດສຸມປະກອບມີ **04** ໜ້າວຽກໃຫຍ່ຕົ້ນຕໍມີຄື:

① ແຜນວຽກຂຽນປະຫວັດເມືອງປາກງື່ມ;

② ແຜນວຽກປະກາດວັດພຣະທາດຖິ່ນຊ້ອຍເປັນມໍລະດົກແຫ່ງຊາດລະດັບທ້ອງຖິ່ນແຫ່ງທີ **2** ຂອງນະຄອນຫຼວງວຽງຈັນ;

③ ກິດຈະກຳເມືອງພົ້ນທຸກ;

④ ກິດຈະກຳປະກາດຮັບເອົາແຜນຜັງຕົວເມືອງ;

**4.** ປະຈຸບັນທາງເມືອງປາກງື່ມໄດ້ກະກຽມນິຕິກຳສຳເລັດດັ່ງນີ້:

1) ມະຕິຂອງຄະນະປະຈຳພັກເມືອງປາກງື່ມ ສະບັບເລກທີ **663**/ຄພ.ປງ, ລົງວັນທີ **28** ຕຸລາ **2024;**

2) ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບກະກຽມສະເຫຼີມສະຫຼອງວັນສ້າງຕັ້ງເມືອງປາກງື່ມ ຄົບຮອບ **30** ປີ (**30** ທັນວາ **1994** ຫາ **30** ທັນວາ **2024**);

3) ແຜນການສະເຫຼີມສະຫຼອງເມືອງ;

4) ໂຄງຮ່າງປະຫວັດຄວາມເປັນມາຂອງເມືອງ.

ເພື່ອຮັບປະກັນເຮັດໃຫ້ວຽກງານດັ່ງກ່າວສຳເລັດຕາມຄາດໝາຍກຳນົດ, ເວລາ ທາງເມືອງຈຶ່ງໄດ້ມີທັດສະນະດັ່ງນີ້:

**1.** ເຫັນຄວນມີຂໍ້ຕົກລົງຈາກ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແຕ່ງຕັ້ງທີ່ປຶກສາ ແລະ ຄະນະກຳມະການຮັບຜິດຊອບໃນການຊີ້ນຳຂັ້ນນະຄອນຫຼວງວຽງຈັນ ເພື່ອຊີ້ນຳ ແລະ ບັນຊາຊ່ວຍ;

**2.** ເຫັນຄວນເອົາເຂົ້າກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນ ຫຼື ກອງປະຊຸມເຈົ້າຄອງ, ຮອງເຈົ້າຄອງ ເພື່ອຂໍທິດຊີ້ນຳຈຶ່ງໄວ.

ດັ່ງນັ້ນ ຈຶ່ງຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນຳ, ເຫັນຄວນແນວໃດຂໍອະນຸຍາດໃຫ້ຫ້ອງວ່າການນະຄອນຫຼວງວຽງຈັນ ແຈ້ງທິດຊີ້ນຳໃຫ້ເມືອງປາກງື່ມ ຮັບຊາບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ເຈົ້າເມືອງ**

ເມືອງປາກງື່ມ

ຄຳພູນ ຕຽງທະລາດ

**ບ່ອນສົ່ງ:**

1. ຫ້ອງວ່າການນະຄອນຫຼວງຈັນ **01** ສະບັບ;
2. ສຳເນົາເກັບມ້ຽນ **01** ສະບັບ.